rfa | ວິທຍຸເອເຊັຽເສຣີ

# ຊາວບ້ານຈະເສັຍທີ່ດິນໃຫ້ ເຂື່ອນ ນໍ້າລີກ1

**ຈຳປາທອງ**
2014.07.10



*ເຮືອຫາປາ ຂອງຊາວບ້ານ ໃນອ່າງນໍ້າລີກ*

ຊາວບ້ານ ໃນເຂດ ກໍ່ສ້າງ ເຂື່ອນ ນ້ຳລິກ1 ຢູ່ແຂວງ ວຽງຈັນ ເປີດເຜີຍວ່າ ໂຄງການ ກໍ່ສ້າງເຂື່ອນ ໄດ້ເລີ້ມ ປະຕິບັດ ຂຶ້ນແລ້ວ ເຖິງວ່າ ປະຊາຊົນ ຈະບໍ່ຖືກ ໃຫ້ ໂຍກຍ້າຍ ໜີໄປຢູ່ ບ້ານອື່ນ ແຕ່ ໂຄງການ ນີ້ ກໍຈະເຮັດ ໃຫ້ພວກ ເຂົາເຈົ້າ ສູນເສັຍ ພື້ນທີ່ ຂອງ ຕົນໄປ ໃນເນື້ອທີ່ 500 ເຮັກຕາ ທີ່ ເຄີຍມີມາ ແຕ່ດຶກ ດຳບັນ:

*"ແຕ່ດຶກ ດຳບັນ ແຕ່ເກົ່າ ແຕ່ປູ່ຍ່າ ຕາຍາຍ ເພິ່ນ ນະ ເປັນຂອບ ເຂດ ຂອງບ້ານຂາມ ແລ້ວກໍບ້ານ ໂພນແກ້ວ ບ້ານ ຫາດ ວັງມົນ ໄປ ຈັ່ງຊີ້ນະ ແຕ່ວ່າ ເນື້ອທີ່ ຈະຖືກສ້າງ ເຂື່ອນ ນ້ຳລິກ1 ນີ້ຖືກ ເນື້ອທີ່ ຂອງ ບ້ານຂາມ ເນື້ອທີ່ນີ້ ມັນມີຢູ່ 500 ເຮັກຕາ ເນາະ ທັມດາ ມັນ ແຕ່ຖືກຈັ່ງ ຊີ້ນີ້ນະ ກໍຈະເສັຍໄປ ກໍຈະຫລຸດ ຜ່ອນ ໄປຫລາຍ".*

ທ່ານກ່າວ ຕໍ່ໄປວ່າ ພື່ນທີ່ ທີ່ຈະສູນ ເສັຍໄປ ນັ້ນ ເຖິງແມ່ນ ປະຊາຊົນ ຍັງບໍ່ໄດ້ ປູກຝັງ ແລະ ປຸກສ້າງ ຫຍັງໃສ່ ແຕ່ກໍ ເປັນ ບ່ອນຫາຢູ່ ຫາກິນ ຫາເຄື່ອງປ່າ ຂອງດົງ ແລະ ໃຊ້ໄມ້ ເພື່ອ ຜົລປະໂຫຍດ ລວມ ຂອງ ຊາວບ້ານ ແລະວ່າ ຖ້າມີ ໂຄງການ ເຂື່ອນນີ້ ກໍຖືວ່າ ມີຜົລ ກະທົບ ເລັກນ້ອຍ. ແຕ່ຊາວບ້ານ ສ່ວນຫລາຍ ເຫັນດີນຳ ທາງການ ຍອມ ເສັຍສຣະ ເພື່ອການ ພັທນາ ປະເທສ.

ເຂື່ອນນ້ຳລິກ1 ຕັ້ງຢູ່ລຳ ນ້ຳລິກ ໃນເຂດ ເມືອງ ໂພນໂຮງ ແຂວງ ວຽງຈັນ, ມູນຄ່າ ການກໍ່ສ້າງ ປະມານ 124 ລ້ານ ໂດລາ ສະຫະຣັດ ແລະ ຈະໃຊ້ ເວລາ ກໍ່ສ້າງ ປະມານ 3 ປີ ເຄິ່ງ, ຈະມີກຳລັງ ການຜລິດ 64 MW, ຈະຜລິດ ກະແສ ໄຟຟ້າ ສົ່ງໃຫ້ ໂຮງໄຟຟ້າ ແລະ ສະຖານີ ໄຟຟ້າ ຫິນເຫີບ.

ໂຄງການ ເຂື່ອນ ແຫ່ງນີ້ ເປັນໂຄງການ ຮ່ວມ ຣະຫວ່າງ ບໍຣິສັດ ປຕທ ຂອງໄທ ແລະ ບໍຣິສັດ ພັທນາ ພະລັງງານ ຂອງລາວ. ສຳລັບ ເຣື້ອງຄ່າ ຊົດເຊີຍ ຄວາມ ເສັຍຫາຍ ນັ້ນ ຊາວບ້ານ ຍັງບໍ່ທັນຮູ້ ຣາຍຣະອຽດ ເທື່ອ ມີແຕ່ ເຈົ້າໜ້າທີ່ ໂຄງ ການ ໃຫ້ ສັນຍາວ່າ ຈະໃຫ້.